ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຮອງຜູ້ວ່າການ ທຫລ ຮ່ວມຕິດຕາມການນາລົງຢ້ຽມຢາມ ແລະ ຊຸກຍູ້ການຜະລິດຢູ່ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ



**(ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ ຜູ້ທີ 6 ນັບຈາກຂວາມື)**

ໃນລະຫວ່າງວັນທີ 22 – 27 ກໍລະກົດ ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ ໄດ້ລົງເຄື່ອນໄຫວໂດຍຮ່ວມເຮັດວຽກນຳ ທ່ານ ທອງລຸນ ສີສຸລິດ ປະທານປະເທດ ສປປ ລາວ ພ້ອມດ້ວຍຄະນະນຳຂອງນະຄອນຫຼວງ, ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈຸດປະສົງຂອງການລົງເຄື່ອນໄຫວໃນຄັ້ງນີ້ ແມ່ນໄດ້ຢ້ຽມຢາມຈິດປັນຍາຟາມ ຕັ້ງຢູ່ບ້ານໜອງພູວຽງ ເມືອງປາກງື່ມ ນະຄອນຫຼວງວຽງຈັນ ເພື່ອ

ຮັບຟັງການຜະລິດກະສິກຳຂອງຟາມດັ່ງກ່າວ ເປັນຕົ້ນ: ການປູກຫຍ້າ, ລ້ຽງງົວ, ປູກໄມ້ກິນໝາກ, ສ້າງສາງໂຮງງານປະສົມອາຫານ, ຫົນທາງ ແລະ ໜອງເກັບນ້ຳ ແລະ ອື່ນໆ



ໃນຕໍ່ໜ້າຈິດປັນຍາຟາມຈະສຸມໃສ່ການລົງທຶນເພີ່ມ ແລະ ເພີ່ມຈຳນວນງົວ, ເພີ່ມພື້ນທີ່ປູກຫຍ້າ ລົງທຶນໃສ່ເປົ້າໝາຍຈະໃຫ້ມີງົວແມ່ພັນ 500 ໂຕ ໃນທ້າຍປີ 2024 ແລະ ມີ 5.000 ໂຕໃນປີ 2029. ສຳລັບປີ 2023 ຟາມຈະສາມາດຜະລິດລູກງົວໄດ້ 135 ໂຕ ຈຶ່ງຖືໂອກາດນີ້ ສະເໜີຂັ້ນເທິງໃຫ້ພິຈາລະນາ ກ່ຽວກັບຂໍ້ຫຍຸ້ງຍາກ ໂດຍສະເພາະ ຂີ້ເບຍທີ່ນຳມາເປັນວັດຖຸດິບໃນການປຸງແຕ່ງເປັນອາຫານສັດເຊິ່ງມີຄວາມຕ້ອງການເປັນຈຳນວນຫຼາຍ ແລະ ບັນຫາຄ່າໄຟທີ່ມີລາຄາສູງ ແລະ ບັນຫາອື່ນໆຈຳນວນໜຶ່ງ. ນອກຈາກນີ້ ຍັງໄດ້ສືບຕໍ່ຢ້ຽມຢາມການປູກສາລີເປັນສິນຄ້າຂອງປະຊາຊົນບ້ານໂນນຊາຍ ໂດຍມີການໝູນວຽນສັບປ່ຽນໄປຕາມລະດູການເຊັ່ນ: ປູກສາລີ, ປູກໃບຢາສູບ ແລະ ມັນເຜົາ ຢ້ຽມຢາມສະຖານທີ່ທ່ອງທ່ຽວນ້ຳປ່ຽນຢໍລະປ່າ ບ້ານຊຽງແລ ທ່າເມືອງປາກງື່ມ ຢ້ຽມຢາມໂຮງງານຜະລິດເຫຼັກວິເຄເຄ ບ້ານໂພຄຳ ແລະ ບໍລິສັດ ຜະລິດທໍ່ນ້ຳລາວ ບ້ານນາແຄ ເມືອງໄຊທານີ.



ພ້ອມນີ້, ທ່ານຮອງຜູ້ວ່າການ ທຫລ ໄດ້ສືບຕໍ່ເຄື່ອນໄຫວຢ້ຽມຢາມ ແລະ ຊຸກຍູ້ວຽກງານ ຢູ່ແຂວງວຽງຈັນ ໂດຍຮ່ວມເຄື່ອນໄຫວເຮັດວຽກນຳທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແລະ ຄະນະນຳຂອງແຂວງ, ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ການເຄື່ອນໄຫວຕິດຕາມຄະນະລັດຖະບານ ຂອງ ທະນາຄານແຫ່ງ ສປປ ລາວ ໃນຄັ້ງນີ້ ກໍເພື່ອເປັນການເກັບກຳບັນດາຂໍ້ມູນຂອງຫົວໜ່ວຍການຜະລິດ  ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າສົ່ງອອກ ໃນບັນດາຂະແໜງການທີ່ພວກເຮົາມີທ່າແຮງ ແລະ ສາມາດທົດແທນໄດ້ ເປັນຕົ້ນ ການປູກພືດ, ເຂົ້າ, ສາລີ ແລະ ສັດໃຫຍ່ ເປັນສິນຄ້າ ຜ່ານນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຄຸ້ມຄອງລາຍຮັບຈາກການຄ້າ ແລະ ການບໍລິການທີ່ເປັນເງິນຕາໃຫ້ເຂົ້າສູ່ລະບົບຄົບຖ້ວນ. ພ້ອມນີ້ ຍັງໄດ້ຊຸກຍູ້ໃຫ້ບໍລິສັດຜູ້ພັດທະນາໂຄງການນຳໃຊ້ສະກຸນເງິນກີບສຳລັບການຊື້ຂາຍແລກປ່ຽນພາຍໃນ, ຄ່າແຮງງານ ແລະ ອື່ນໆ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ..

ສຳລັບສະຖານທີ່ໃນການລົງຢ້ຽມຢາມມີ ໂຮງງານຜະລິດໝາກໄມ້ ແລະ ນ້ຳຫວານສາລີ  ຂອງບໍລິສັດລາວອຸດສະຫະກຳ-ກະສິກຳ ຈຳກັດ ທີ່ບ້ານເກີນ, ພົບປະໂອ້ລົມປະຊາຊົນກຸ່ມບ້ານແຈ້ງ, ຢ້ຽມຢາມຟາມລ້ຽງງົວພັນໃຫຍ່ເພື່ອສົ່ງອອກ ຂອງຟາມນ້ຳເພັດຈະເລີນຊັບ ທີ່ບ້ານຕານປ່ຽວ, ເມືອງທຸລະຄົມ ແລະ

ໂຄງການປັບປຸງເສັ້ນທາງ ແລະ ສິ່ງອຳນວຍຄວາມສະດວກ ເພື່ອການທ່ອງທ່ຽວ ເຂດໜ້າເຂື່ອນໄຟຟ້ານ້ຳງື່ມ, ເມືອງແກ້ວອຸດົມ, ແຂວງວຽງຈັນ ເຊິ່ງ ແຕ່ລະພາກສ່ວນກໍໄດ້ເອົາໃຈໃສ່ໃນການພັດທະນາກິດຈະການຂອງຕົນ, ຜະລິດສິນຄ້າໃຫ້ມີຄວາມຫຼາກຫຼາຍຮູບແບບ ແລະ ສ້າງແຜນຄວາມຕ້ອງການວັດຖຸດິບ, ຄວາມຕ້ອງການນຳໃຊ້ທີ່ດິນປູກຝັງ, ການນຳເຂົ້າວັດຖຸ, ອຸປະກອນ, ແນວພັນ, ປຸ໋ຍ ແລະ ອື່ນໆ ເພື່ອເຮັດໃຫ້ຕົ້ນທຶນການຜະລິດ, ການປຸງແຕ່ງຂອງຊາວກະສິກອນຕໍ່າລົງ, ສິນຄ້າມີຄຸນນະພາບ ແລະ ສາມາດແຂ່ງຂັນໄດ້.




**ພາບ-ຂ່າວ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ**